ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ເຜີຍແຜ່ນິຕິກຳການຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ແກ່ຂົງເຂດສະຖາບັນການເງິນທີ່ບໍ່ແມ່ນທະນາຄານ




ໃນຕອນເຊົ້າຂອງວັນທີ 3 ສິງຫາ 2023 ທີ່ ຫ້ອງປະຊຸມໃຫຍ່ ຕະຫຼາດຫຼັກຊັບລາວ, ກົມຄຸ້ມຄອງເງິນຕາຕ່າງປະເທດ ຮ່ວມກັບ ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມເຜີຍແຜ່ນິຕິກຳການຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ແກ່ພາກສ່ວນສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໂດຍການເປັນປະທານຂອງທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ ແລະ ທ່ານ ນາງ ສົມມະໄລ ວົງຄໍາຊາວ ຮອງຫົວໜ້າກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ມີຜູ້ເຂົ້າຮ່ວມຈາກບັນດາສະຖາບັນການເງິນທີ່ບໍ່ແມ່ນທະນາຄານເຂົ້າຮ່ວມຫຼາຍກວ່າ 100 ຄົນ.

ຈຸດປະສົງໃນການຈັດກອງປະຊຸມເຜີຍແຜ່ໃນຄັ້ງນີ້ ແມ່ນເພື່ອເປັນເວທີເຜີຍແຜ່ເນື້ອໃນຈິດໃຈຂອງບັນດານິຕິກຳທີ່ຕິດພັນກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ ກໍ່ຄືກົດໝາຍ ແລະ ຄຳສັ່ງ ຂອງລັດຖະບານ ໃຫ້ພາກສ່ວນສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໄດ້ຮັບຮູ້ ແລະ ກຳໄດ້ຢ່າງເລິກເຊິ່ງ ໂດຍສະເພາະແມ່ນກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ເລກທີ 15/ສພຊ, ລົງວັນທີ 7 ກໍລະກົດ 2022 ແລະ ຄຳສັ່ງນາຍົກລັດຖະມົນຕີ ເລກທີ 10/ນຍ, ລົງວັນທີ 10 ກໍລະກົດ 2023. ເຊິ່ງໃນນີ້, ໄດ້ເນັ້ນໜັກໃຫ້ທຸກພາກສ່ວນປະຕິບັດຕາມກົດໝາຍ ແລະ ຄຳສັ່ງ ຢ່າງເຂັ້ມງວດ ເປັນຕົ້ນ: ຕ້ອງຕິດປະກາດໂຄສະນາ ແລະ ຮັບຊຳລະເປັນເງິນກີບ ເທົ່ານັ້ນ ເພື່ອບໍ່ໃຫ້ເກີດການປຽບທຽບອັດຕາແລກປ່ຽນ; ບໍ່ຄວນສະໜັບສະໜູນການຊື້ສິນຄ້າ ແລະ ບໍລິການ ກັບຜູ້ທີ່ຕິດປະກາດ ແລະ

ຮຽກຮ້ອງ ການຊຳລະເປັນເງິນຕາຕ່າງປະເທດ ເພື່ອບໍ່ເປັນການສົ່ງເສີມການເຄື່ອນໄຫວທີ່ຜິດກົດໝາຍ ແລະ ນຳໃຊ້ເງິນຕາຢ່າງປະຢັດ ເພື່ອຫຼຸດຜ່ອນການນຳໃຊ້ສິນຄ້າ ແລະ ການບໍລິການ ທີ່ນຳເຂົ້າຈາກຕ່າງປະເທດ.



ນອກຈາກນີ້, ຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ເຊີດຊູຄວາມເປັນເຈົ້າການເຂົ້າຮ່ວມ ແລະ ຫ້າວຫັນປະກອບຄຳຄິດຄຳເຫັນຢ່າງຕັ້ງໜ້າ ຢ່າງກົງໄປກົງມາ ແລະ ຕັ້ງຄຳຖາມຕໍ່ບັນຫາທີ່ບໍ່ທັນເຂົ້າໃຈ ເຮັດໃຫ້ກອງປະຊຸມໃນຄັ້ງນີ້ ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ ແລະ ປະກອບສ່ວນໃຫ້ແກ່ການປະຕິບັດຄຳສັ່ງດັ່ງກ່າວໄດ້ຮັບຜົນສຳເລັດເປັນຢ່າງດີ.

**# ຂ່າວ-ພາບ: ວັນປະເສີດ ສົມບູນຂັນ.**

## ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ